# ພຣະຄຳພີ

## ຈົດໝາຍຂອງໂປໂລ ທີ່ມີໄປເຖິງ ຟີເລໂມນ

ສະບັບ 2010

# ຈົດໝາຍຂອງໂປໂລ ທີ່ມີໄປເຖິງ
# ຟີເລໂມນ

[1]ໂປໂລ ຜູ້ຖືກຈຳຈອງຢູ່ເພາະພຣະເຢຊູຄຣິດ ແລະຕີໂມທຽວນ້ອງຂອງເຮົາ, [2]ເຖິງ ຟີເລ-
ໂມນເພື່ອນຮ່ວມງານທີ່ຮັກຂອງເຮົາ, ກັບຄຣິສຕະຈັກທີ່ຢູ່ໃນເຮືອນຂອງເຈົ້າ, ແລະອັບເຟຍ
ນ້ອງສາວ, ກັບອາຂີໂປ ຜູ້ເປັນເພື່ອນທະຫານດ້ວຍກັນກັບເຮົາ. [3]ຂໍພຣະຄຸນ ແລະສັນຕິສຸກ
ຈາກພຣະບິດາເຈົ້າຂອງເຮົາທັງຫລາຍ ແລະຈາກພຣະເຢຊູຄຣິດເຈົ້າ ຈົ່ງມີຢູ່ກັບເຈົ້າທັງຫລາຍ
ເທີ້ນ.

## ຄວາມຮັກແລະຄວາມເຊື່ອຂອງຟີເລໂມນ

[4]ຟີເລໂມນເອີຍ, ເຮົາຂອບພຣະຄຸນພຣະຜູ້ເປັນເຈົ້າຂອງເຮົາຢູ່ສະເໝີ ແລະລະນຶກເຖິງເຈົ້າ
ເມື່ອເຮົາອ້ອນວອນ. [5]ເພາະເຮົາໄດ້ຮັບຂ່າວເລື່ອງຄວາມຮັກແລະຄວາມເຊື່ອຂອງເຈົ້າ ທີ່ເຈົ້າມີຕໍ່
ພຣະເຢຊູເຈົ້າ ແລະຕໍ່ບັນດາໄພ່ພົນທັງປວງຂອງພຣະເຈົ້າ. [6]ເຮົາໄດ້ອ້ອນວອນຂໍໃຫ້ການເຂົ້າ
ສ່ວນໃນຄວາມເຊື່ອຂອງເຈົ້ານັ້ນ ຈົ່ງໄດ້ເກີດຜົນ ຄືເພີ່ມພູນຄວາມສັງເກດຮູ້ໃນການດີທຸກຢ່າງ
ທີ່ພວກເຮົາມີໃນພຣະຄຣິດ. [7]ນ້ອງເອີຍ, ເຮົາມີຄວາມຍິນດີຫລາຍ ແລະໄດ້ຮັບການຊູໃຈເພາະ
ຄວາມຮັກຂອງເຈົ້າ ຈິດໃຈຂອງໄພ່ພົນຂອງພຣະເຈົ້າໄດ້ຊຸ່ມເຢັນຂຶ້ນເພາະເຈົ້າ.

## ໂປໂລຂໍຮ້ອງເລື່ອງໂອເນຊີໂມ

[8]ເຫດສັນນັ້ນ, ເຖິງແມ່ນວ່າຍ້ອນເຮົາເປັນພີ່ນ້ອງກັນໃນພຣະຄຣິດ ເຮົາມີໃຈກ້າພໍທີ່ຈະສັ່ງ
ເຈົ້າໃຫ້ເຮັດສິ່ງທີ່ຄວນເຮັດ. [9]ແຕ່ເພາະເຫັນແກ່ຄວາມຮັກ ເຮົາຈຶ່ງຂໍຮ້ອງເຈົ້າກໍດີກວ່າ ເຮົາ, ຄື
ໂປໂລ ຜູ້ເປັນລາຊະທູດຂອງພຣະເຢຊູຄຣິດ ແລະບັດນີ້ໄດ້ຖືກຈຳຈອງຢູ່ເພາະເຫັນແກ່ພຣະອົງ
ດ້ວຍ.[*] [10]ເຮົາຂໍຮ້ອງເຈົ້າດ້ວຍເລື່ອງໂອເນຊີໂມ,[ຂ] ລູກຂອງເຮົາ ທີ່ເຮົາໄດ້ເກີດເປັນພໍ່ຂອງ
ລາວຝ່າຍຄວາມເຊື່ອ ເມື່ອເຮົາຖືກຈຳຈອງຢູ່. [11]ເມື່ອກ່ອນ, ລາວບໍ່ເປັນປະໂຫຍດແກ່ເຈົ້າ ແຕ່
ບັດນີ້ກໍເປັນປະໂຫຍດແກ່ເຈົ້າແລະແກ່ເຮົາເໝືອນກັນ. [12]ບັດນີ້ເຮົາໄດ້ໃຊ້ລາວຄືນມາຫາເຈົ້າ
ໂອເນຊີໂມຜູ້ນີ້ທີ່ກັບໝາກຫົວໃຈຂອງເຮົາ. [13]ເຮົາຢາກໃຫ້ລາວຢູ່ກັບເຮົາ ເພື່ອລາວຈະໄດ້ບົວ-
ລະບັດເຮົາແທນເຈົ້າ ໃນລະຫວ່າງທີ່ເຮົາຖືກຈຳຈອງຢູ່ເພາະຂ່າວປະເສີດນັ້ນ. [14]ແຕ່ວ່າເຮົາບໍ່
ຢາກເຮັດສິ່ງໃດກ່ອນໄດ້ຮັບຄວາມເຫັນຈາກເຈົ້າ ເພື່ອຄຸນຄວາມດີທີ່ເຈົ້າເຮັດນັ້ນຈະບໍ່ເປັນການ
ຂົ່ມໃຈ ແຕ່ໃຫ້ເປັນຕາມຄວາມປະສົງຂອງເຈົ້າດ້ວຍ. [15]ເພາະວ່າບາງທີອາດຈະເປັນເພາະເຫດ
ນີ້ ທີ່ໃຫ້ລາວໄດ້ພາກຈາກໄປຈັກຄາວໜຶ່ງເພື່ອເຈົ້າຈະໄດ້ຮັບລາວກັບຄືນມາຢູ່ອີກຕໍ່ໄປ. [16]ບໍ່
ແມ່ນລາວຈະເປັນຂ້ອຍຂ້າຕໍ່ໄປແຕ່ດີກວ່າຂ້ອຍຂ້າອີກ ຄືເປັນອ້າຍນ້ອງທີ່ຮັກ ລາວເປັນທີ່ຮັກ
ຂອງເຮົາ ແຕ່ຄົງຈະເປັນທີ່ຮັກຂອງເຈົ້າຫລາຍກວ່ານັ້ນອີກ ທັງໃນຖານະເປັນເພື່ອນມະນຸດ

---

[*]ຫລືວ່າ “ໂປໂລ ຜູ້ເຖົ້າທັງເປັນຜູ້ຖືກມັດຢູ່ບັດນີ້ເພາະເຫັນແກ່ພຣະຄຣິດເຢຊູ.” [ຂ]ໂອເນຊີໂມ ແປວ່າ
ທີ່ເປັນປະໂຫຍກ, ທີ່ໃຫ້ໄດ້ກຳໄລ, ທີ່ຊ່ອຍເຫລືອ, ຫລືທີ່ສົງເຄາະ.

ແລະເປັນເພື່ອນຄຣິສະຕຽນດ້ວຍກັນ. 17ເຫດສັນນັ້ນຖ້າເຈົ້າຖືວ່າເຮົາເປັນເພື່ອນຮ່ວມງານຂອງ
ເຈົ້າ ກໍຈົ່ງຮັບລາວໄວ້ເໝືອນຮັບຕົວເຮົາເອງ. 18ແລະຖ້າລາວໄດ້ເຮັດຜິດພາດຕໍ່ເຈົ້າປະການໃດ
ຫລືໄດ້ເປັນໜີ້ເຈົ້າ ກໍໃຫ້ເຈົ້າຄິດເອົານຳເຮົາ. 19ຝ່າຍເຮົາໄດ້ລົງມືຂຽນໄວ້ວ່າ, “ເຮົາ, ໂປໂລ ຈະ
ໃຊ້ແທນໃຫ້” ແຕ່ສ່ວນເຈົ້າເປັນໜີ້ເຮົານັ້ນ ຄືຊີວິດຂອງເຈົ້າເອງ ເຮົາຈະບໍ່ອ້າງເຖິງ. 20ດັ່ງນີ້
ແຫລະ ນ້ອງເອີຍ, ຂໍໃຫ້ເຮົາໄດ້ຮັບປະໂຫຍດຈາກເຈົ້າເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ໃຫ້ໃຈ
ຂອງເຮົາຊຸ່ມເຢັນຂຶ້ນໃນຖານະເປັນຄຣິສະຕຽນຮ່ວມກັນ. 21ເຮົາມີຄວາມໝັ້ນໃຈວ່າເຈົ້າຈະເຊື່ອ
ຟັງເຮົາ ຈຶ່ງໄດ້ຂຽນຈົດໝາຍມາເຖິງເຈົ້າເພາະຮູ້ວ່າເຈົ້າຈະເຮັດລື່ນກວ່າທີ່ເຮົາເວົ້ານັ້ນອີກ. 22ແຕ່
ຢ່າງໃດກໍດີ, ເຈົ້າຈົ່ງຈັດແຈງທີ່ພັກໄວ້ຖ້າເຮົາ ເພາະເຮົາຫວັງໃຈວ່າພຣະເຈົ້າຈະຊົງໂຜດໃຫ້ເຮົາ
ມາຫາເຈົ້າອີກ ຕາມຄວາມອ້ອນວອນຂອງພວກເຈົ້າ.

## ຄຳສະແດງຄວາມຄິດເຖິງໃນຕອນທ້າຍ

23ເອປາຟາ, ຜູ້ຖືກຈຳຈອງດ້ວຍກັນກັບເຮົາ ເພາະເຫັນແກ່ພຣະເຢຊູຄຣິດ ກໍຝາກຄວາມຄຶດ
ເຖິງມາຍັງເຈົ້າ. 24ມາຣະໂກ, ອາຣິດຕາໂຂ, ເດມາ, ແລະລູກາເພື່ອນຮ່ວມງານຂອງເຮົາ ກໍ
ຝາກຄວາມຄຶດເຖິງມາຍັງເຈົ້າດ້ວຍ. 25ຂໍພຣະຄຸນຂອງພຣະເຢຊູຄຣິດເຈົ້າ ຈົ່ງສະຖິດຢູ່ກັບຈິດ
ວິນຍານຂອງເຈົ້າທັງຫລາຍເທີ້ນ.

* * *

# ຕົວຫຍໍ້

| ຊື່ພຣະທຳ | ຕົວຫຍໍ້ | ຊື່ພຣະທຳ | ຕົວຫຍໍ້ |
|---|---|---|---|
| ປະຖົມມະການ | ປຖກ | ປັນຍາຈານ | ປຍຈ |
| ອົບພະຍົບ | ອພຍ | ຍອດເພງ | ຍດພ |
| ລະບຽບພວກເລວີ | ລລວ | ເອຊາຢາ | ອຊຢ |
| ຈົດເຊັນບັນຊີ | ຈຊບ | ເຢເຣມີຢາ | ພຄຄ |
| ພຣະບັນຍັດສອງ | ພບຍ | ເພງຄ່ຳຄວນ | ຢຣມ |
| ໂຢຊວຍ | ຢຊຍ | ເອເຊກີເອນ | ອສກ |
| ພວກຜູ້ປົກຄອງ | ຜປຄ | ດານີເອນ | ດນອ |
| ນາງຣຸດ | ນຣດ | ໂຮເຊອາ | ຮຊອ |
| 1 ຊາມູເອນ | 1ຊມອ | ໂຢເອນ | ຢອນ |
| 2 ຊາມູເອນ | 2ຊມອ | ອາໂມດ | ອມດ |
| 1 ກະສັດ | 1ກສດ | ໂອບາດີຢາ | ອບດ |
| 2 ກະສັດ | 2ກສດ | ໂຢນາ | ໂຢນ |
| 1 ຂ່າວຄາວ | 1ຂຄວ | ມີກາ | ມກາ |
| 2 ຂ່າວຄາວ | 2ຂຄວ | ນາຮູມ | ນຮມ |
| ເອັດຊະຣາ | ອສຣ | ຮາບາກຸກ | ຮບກ |
| ເນເຣມີຢາ | ນຣຢ | ເຊຟານີຢາ | ສຟຢ |
| ເອສະເທີ | ອຊທ | ຮັກກາຍ | ຮກຍ |
| ໂຢບ | ໂຢບ | ເສກາລີຢາ | ສກຢ |
| ເພງສັນລະເສີນ | ພສສ | ມາລາກີ | ມລກ |
| ສຸພາສິດ | ສພສ | | |

This 2010 edition of the Lao Bible has been revised and extended from the 1979 edition of the Lao Shorter Old Testament and 1973 edition of the Lao New Testament, as published by Thailand Bible Society in 1991.

Lao Bible Online – http://www.laobible.net.